ENVIRONMENTAL SCIENCE JOURNAL FOR TEENS

ພວກເຮົາສາມາດປົກປັກຮັກສາສັດປ່າ ຜ່ານການທ່ອງທ່ຽວແບບອະນຸລັກແນວໃດ?

ສະເລ່ຍຄຳຖາມ ສຳລັບຄູສອນ

ກວດກາຄືນຄວາມເຂົ້າໃຈຂອງທ່ານ

1 ເປົ້າໝາຍພື້ນຖານຂອງການທ່ອງທ່ຽວແບບອະນຸລັກ ແມ່ນຫຍັງ?

ຄຳຕອບ: ການໄປທ່ອງທ່ຽວພື້ນທີ່ທຳມະຊາດ ແລະ ຮຽນຮູ້ກ່ຽວກັບມັນ, ຊ່ວຍສະໜັບສະໜູນການປົກປັກຮັກສາສັດປ່າ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນ, ການຈາກໄປໂດຍບໍ່ປະຖິ້ມຮອຍ ຫຼື ຜົນກະທົບຈາກການໄປທ່ອງທ່ຽວຂອງທ່ານ.

2 ຍ້ອນຫຍັງ ປະຊາຊົນໃນທ້ອງຖິ່ນ (ໃນ ສປປ ລາວ ສຳລັບກໍລະນີນີ້) ລ່າສັດແບບຜິດກົດໝາຍ ຖ້າວ່າ ມີລະບຽບການ ແລະ ກົດໝາຍສະເພາະ ບໍ່ໃຫ້ເຮັດ?

ຄຳຕອບ: ເພື່ອກິນເປັນອາຫານໃນແຕ່ລະວັນ ຫຼື ເພື່ອຂາຍຫາເງິນ.

3 ໜ່ວຍລາດຕະເວນປ່າສະຫງວນ ຈັບຊາວບ້ານບາງຈຳນວນທີ່ລ່າສັດປ່າແບບຜິດກົດໝາຍ ເຖິງແມ່ນວ່າ ພວກເຂົາໄດ້ເຊັນສັນຍາການທ່ອງທ່ຽວແບບອະນຸລັກ. ທ່ານຄິດວ່າ ຍ້ອນຫຍັງ ຊາວບ້ານໄປລ່າສັດປ່າ ພາຍຫຼັງທີ່ໄດ້ເຊັນສັນຍາແລ້ວ? ຜົນກະທົບຕາມມາແມ່ນຫຍັງ?

ຄຳຕອບ: ບາງເທື່ອ ພວກເຂົາອາດມັກການລ່າສັດປ່າ, ຫຼື ພວກເຂົາຕ້ອງການຫາເງິນເພີ່ມເຕີມນອກເໜືອຈາກລາຍໄດ້ຈາກກອງທຶນທີ່ແບ່ງປັນຈາກການທ່ອງທ່ຽວ. ຜົນກະທົບທີ່ຕາມມາ ແມ່ນການປັບໃໝທີ່ພວກເຂົາຕ້ອງຈ່າຍໃຫ້ກັບອົງການຄຸ້ມຄອງປ່າສະຫງວນແຫ່ງຊາດ, ພ້ອມທັງ ບ້ານທີ່ພວກເຂົາອາໄສຢູ່ນັ້ນ ໄດ້ຮັບເງິນໜ້ອຍລົງຈາກການທ່ອງທ່ຽວແບບອະນຸລັກ.

4 ພວກເຮົາຕິດຕາມຄວາມອຸດົມສົມບູນຂອງສັດປ່າໄດ້ແນວໃດ?

ຄຳຕອບ: ບັນດານັກທ່ອງທ່ຽວ ໄດ້ລາຍງານຈຳນວນ ແລະ ປະເພດສັດປ່າທີ່ພວກເຂົາເຫັນໃນລະຫວ່າງການທ່ອງທ່ຽວຊົມ.